ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 030 9882809,ແຟັກ:(856-21)

ເລກທີ: 149 /ລອທ

ນະຄອນຫຼວງວຽງຈັນ, 16 NOV 2026

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 04 ປະຈຳປີ 2026

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ" ຫຼື "ລອທ") ໄດ້ຈັດກອງປະຊຸມສະພາບໍລິຫານ ຄັ້ງທີ 04 ປະຈຳປີ 2026 ຈັດຂຶ້ນໃນວັນທີ 15 ພະຈິກ 2026 ເວລາ 14:00 ໂມງ ຢູ່ທີ່ສຳນັກງານໃຫຍ່ ບໍລິສັດ ລາວອາໂກຣເທັກ ມະຫາຊົນ, ຖະໜົນ 13 ເໜືອ, ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ ໃຫ້ກຽດເປັນປະທານໂດຍ ທ່ານ ອະພິສິດ ຮຸຈິກຽດກຳຈອນ ປະທານສະພາບໍລິຫານ.

<u>ລາຍຊື່ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ</u>

1.	ທ່ານ ອະພິສິດ	ຮຸຈິກຽດກຳຈອນ	ປະທານສະພາບໍລິຫານ
2.	ທ່ານ ນາງ ຄຳແພງ	ພັດທະດາວົງ	ຮອງປະທານສະພາບໍລິຫານ
3.	ທ່ານ ເສດ	ພັດທະນະມາດ	ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ
4.	ທ່ານ ນາງ ດວງສະໄໝ	ເລົ່າຝຸງ	ສະມາຊິກສະພາບໍລິຫານ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາ ບໍລິຫານ ສະໄໝສາມັນ ຄັ້ງທີ 04 ປະຈຳປີ 2026 ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ມະຕິເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານ ຄັ້ງທີ 03 ປະຈຳປີ 2026.
2. ມະຕິເຫັນດີຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ແລະ ບົດລາຍງານການເງິນຂອງບໍລິສັດ ສຳລັບໄຕມາດ 03 ປີ 2026.

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອະພິສິດ ຣຸຈິກຽດກຳຈອນ